ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------------------

ກະຊວງອຸດສາຫະກຳ ແລະການຄ້າ

ເລກທີ **2151** /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ **30 ຕຸລາ 2009**

# ແຈ້ງການ

## ກ່ຽວກັບສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແບບບໍ່ອັດຕະໂນມັດ ຂອງ ສປປ ລາວ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17/8/2006.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ການນຳເຂົ້າ ສະບັບເລກທີ 205/ນຍ, ລົງວັນທີ 11/10/2001.
- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າສະບັບເລກທີ 180/ນຍ, ລົງວັນທີ 07/07/2009.
- ອີງຕາມການເຫັນດີເປັນເອກະພາບລະຫວ່າງ ກະຊວງ ອຸດສາຫະກຳ ແລະ ການຄ້າ ກັບບັນດາກະຊວງທີ່ກ່ຽວຂ້ອງ.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າອອກແຈ້ງການ ດັ່ງນີ້:

1. ສິນຄ້າທີ່ລະບຸໄວ້ໃນແຈ້ງການສະບັບນີ້ ແມ່ນສິນຄ້າທີ່ຕ້ອງໄດ້ຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແບບບໍ່ອັດຕະໂນມັດ (Non-Automatic Import and Export Licensing). ສ່ວນສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແບບອັດຕະໂນມັດ (Automatic Import and Export Licensing) ກະຊວງອຸດສາຫະກຳ ແລະ ການຄ້າ ຈະປະສານງານກັບບັນດາຂະແໜງການກ່ຽວຂ້ອງເພື່ອອອກແຈ້ງການຈັດຕັ້ງປະຕິບັດຕ່າງຫາກ.

2. ອົງການຈັດຕັ້ງ, ບຸກຄົນ ຫລື ນິຕິບຸກຄົນ ທີ່ນໍາເຂົ້າ ຫລື ສົ່ງອອກສິນຄ້າ ທີ່ໄດ້ກໍານົດໄວ້ໃນແຈ້ງການສະບັບນີ້ ຕ້ອງໄດ້ຮັບໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງກ່ອນຈະນໍາເຂົ້າ ຫລື ສົ່ງອອກສິນຄ້າ.

3. ສິນຄ້າປະເພດໃດທີ່ບໍ່ລະບຸໄວ້ໃນບັນຊີລາຍການສິນຄ້າຄວບຄຸມທີ່ຕ້ອງໄດ້ຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກ ແລະ ບໍ່ຄຸ້ມຄອງດ້ວຍມາດຕະການສຸຂານາໄມ ແລະ ອະນາໄມພືດ (SPS) ແລະ ມາດຕະການທາງດ້ານເຕັກນິກທີ່ກີດຂວາງຕໍ່ການຄ້າ (TBT) ແມ່ນໃຫ້ດໍາເນີນການຕາມຂັ້ນຕອນການແຈ້ງເສຍພາສີໄດ້ເລີຍ.

4. ບັນດາຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນມີໜ້າທີ່ປະຕິບັດຕາມແຈ້ງການສະບັບນີ້.

5. ແຈ້ງການສະບັບນີ້ມີຜົນສັກສິດພາຍຫຼັງ 90 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນແຈ້ງການສະບັບເລກທີ 1376/ກອຄ.ກຂອ, ລົງວັນທີ 10/10/2006. ແຈ້ງການ ຫລື ຂໍ້ກໍານົດໃດທີ່ຂັດກັບແຈ້ງການສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກໍາ ແລະ ການຄ້າ,

ດຣ. ນາມ ວິຍະເກດ

ເອກະສານຊ້ອນທ້າຍ

# ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ສິ່ງອອກແບບບໍ່ອັດຕະໂນມັດ ຂອງ ສປປ ລາວ

## I. ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດນຳເຂົ້າ

### 1. ສິນຄ້າເກືອດຫ້າມນຳເຂົ້າ

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ລະບຽບການ | ຂະແໜງການຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|
| 1 | 3601-3603<br>3604.10.10<br>8710<br>9301<br>9302<br>9304<br>9305<br>9306<br>9307 | ປືນ, ລູກປືນ ແລະ ອາວຸດສົງຄາມທຸກຊະນິດ ( ນອກຈາກທາດລະເບີດເພື່ອຮັບໃຊ້ອຸດສາຫະກຳ ) ແລະ ພາຫະນະຮັບໃຊ້ສົງຄາມ. | ເພື່ອຄວາມສະຫງົບແລະຄວາມໝັ້ນຄົງຂອງຊາດ. | - ມາດຕາ 5 ຂອງ ກົດໝາຍອາຍາ.<br>- ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍລະບຽບການຄຸ້ມຄອງແລະນຳໃຊ້ທາດລະເບີດຢູ່ ສປປ ລາວ, ສະບັບເລກທີ 39/ນຍ, ລົງວັນທີ 12/7/2001. | ກະຊວງປ້ອງກັນປະເທດ ( ກົມໃຫຍ່ເສນາທິການ ) | ຂະແໜງການກ່ຽວຂ້ອງ ຈະອອກປຶດແນະນຳ ກ່ຽວກັບ ການນຳເຂົ້າສິນຄ້າຄວບຄຸມພາຍໃຕ້ຄວາມຮັບຜິດຊອບຂອງຕົນ |
| 2 | 1207.91.00<br>1211.40.00<br>1211.90.11<br>1211.90.12<br>1211.90.93<br>1302.11.00'<br>2939.11.00<br>2939.19.00<br>2939.91.10 | ເມັດຝິ່ນ, ດອກຝິ່ນ, ກັນຊາ, ຝິ່ນ, ໂຄເຄນ ແລະ ອານຸພັນຂອງມັນ. | ເພື່ອຄວາມສະຫງົບແລະຄວາມໝັ້ນຄົງຂອງຊາດ | - ມາດຕາ 146 ກົດໝາຍອາຍາ.<br>- ກົດໝາຍວ່າດ້ວຍຢາເສບຕິດ.<br>- ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20/2/2009. | - ກະຊວງປ້ອງກັນຄວາມສະຫງົບ (ຕຳຫຼວດປ້ອງກັນຢາເສບຕິດ)<br>- ສຳນັກງານນາຍົກລັດຖະມົນຕີ ( ອົງການກວດກາ ແລະ ຄວບຄຸມຢາເສບຕິດ ). | |

| | | | | | | |
|---|---|---|---|---|---|---|
| 3 | | ເຄື່ອງມືຫາປາແບບດັບສູບ | ເພື່ອຮັກສາສິ່ງແວດລ້ອມ ແລະ ແຫຼ່ງຊັບພະຍາກອນທາງນໍ້າ | ກົດໝາຍການປະມົງ | ກະຊວງກະສິກຳ ແລະ ປ່າໄມ້ ( ກົມການປະມົງ ) | |
| 4 | | ເຄື່ອງຈັກ Diesel ທີ່ໃຊ້ແລ້ວ | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ຮັກສາສິ່ງແວດລ້ອມ | | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 5 | | ຕູ້ເຢັນ, ຕູ້ເຮັດນໍ້າເຢັນ, ຕູ້ແຊ່ ຫຼື ຕູ້ແຊ່ແຂງທີ່ໃຊ້ສານຊີເອຟຊີ. | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ຮັກສາສິ່ງແວດລ້ອມ | | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 6 | | ສິນຄ້າທີ່ໃຊ້ແລ້ວລວມມີບັນດາໝວດດັ່ງລຸ່ມນີ້ :<br>- ເຄື່ອງຕັດຫຍິບ, ເກີບ, ເຄື່ອງນຸ່ງຫົ່ມ<br>- ເຄື່ອງອີເລັກໂຕນິກ<br>- ເຄື່ອງໃຊ້ໄຟຟ້າ<br>- ອຸປະກອນຕົກແຕ່ງພາຍໃນບ້ານ<br>- ເຄື່ອງໃຊ້ທີ່ເຮັດດ້ວຍເຊລາມິກ, ໂລຫະເຄືອບ, ແກ້ວ, ໂລຫະ, ຢາງພລາດສະຕິກ, ຢາງພາລາ, ທາດແຫຼວ ແລະ ທາດອື່ນໆ. | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ຮັກສາສິ່ງແວດລ້ອມ. | | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 7 | | ຜະລິດຕະພັນການແພດ ແລະ ອຸປະກອນການແພດທີ່ໃຊ້ແລ້ວ | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ເພື່ອຮັກສາສິ່ງແວດລ້ອມ | ນະໂຍບາຍຄຸ້ມຄອງອຸປະກອນການແພດ ປີ 2003. | ກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ, ກົມປິ່ນປົວ) | |
| 8 | | ສານເຄມີທີ່ມີຄວາມອັນຕະລາຍສູງ (Highly Toxic Chemicals) | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ເພື່ອຮັກສາສິ່ງແວດລ້ອມ | | ກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ) | |

## 2. ສິນຄ້າຕ້ອງໄດ້ຂໍອະນຸຍາດນຳເຂົ້າ

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ລະບຽບການ | ຂະແໜງການຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|
| 1 | 1006.10<br>1006.20<br>1006.30<br>1006.40 | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫລື ບໍ່ກໍ່ຕາມ | ເພື່ອຄວບຄຸມການນຳເຂົ້າສິນຄ້າແບບຜິດກົດໝາຍ | - ດຳລັດ ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ການນຳເຂົ້າ, ສະບັບເລກທີ 205/ນຍ, ລົງວັນທີ11/10/2001<br>- ແຈ້ງການ ກ່ຽວກັບຂັ້ນຕອນການນຳເຂົ້າ ແລະສົ່ງອອກ ແລະຈາລະຈອນສິນຄ້າຢູ່ພາຍໃນປະເທດ ສະບັບເລກທີ 1691/ຫສນຍ, ລົງວັນທີ 7/10/2004. | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | ຂະແໜງການກ່ຽວຂ້ອງ ຈະອອກບົດແນະນຳ ກ່ຽວກັບການນຳເຂົ້າສິນຄ້າພາຍໃຕ້ຄວາມຮັບຜິດຊອບຂອງຕົນ |
| 2 | 2523<br>3816 | ຊີມັງ, ມໍທາຣ, ຄອນກຣີດ | ເພື່ອຄວບຄຸມການນຳເຂົ້າແບບຜິດກົດໝາຍ | - ດຳລັດ ວ່າດ້ວຍ ການຄຸ້ມຄອງການສົ່ງອອກ ແລະ ນຳເຂົ້າ ສະບັບເລກທີ 205/ນຍ, ລົງວັນທີ 11/10/2001.<br>- ດຳລັດ ສະບັບເລກທີ 188/ນຍ,<br>- ແຈ້ງການວ່າດ້ວຍຂັ້ນຕອນການດຳເນີນເອກະສານເພື່ອນຳເຂົ້າ-ສົ່ງອອກ ແລະການຈໍລະຈອນສິນຄ້າຢູ່ພາຍໃນປະເທດ ສະບັບເລກທີ 1691/ຫສນຍ, ລົງວັນທີ 7/10/2004. | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 3 | 2710 | ນ້ຳມັນເຊື້ອໄຟ | ເພື່ອຄວບຄຸມການນຳເຂົ້າແບບຜິດກົດໝາຍ, ສໍ້ໂກງ,ຫຼອກລວງ ແລະ ປອມແປງ | - ດຳລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ສະບັບເລກທີ 207/ນຍ, ລົງວັນທີ 11/10/2001.<br>- ຂໍ້ຕົກລົງສະບັບເລກທີ1785/ອຄ.ກພນ ລົງວັນທີ 07/09/2009. ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະບໍລິການ ຂາຍຍົກນ້ຳມັນເຊື້ອໄຟ | ກະຊວງອຸດສາຫະກຳ ແລະການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |

| | | | | | | |
|---|---|---|---|---|---|---|
| 4 | 2711 | ອາຍແກັດ | ເພື່ອຄວບຄຸມການນຳເຂົ້າແບບຜິດກົດໝາຍ | - ດຳລັດ ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ນຳເຂົ້າ ເລກທີ 205/ນຍ, ລົງວັນທີ 11/10/2001<br>- ແຈ້ງການກ່ຽວກັບການດຳເນີນເອກະສານເພື່ອນຳເຂົ້າ ແລະ ສົ່ງອອກ ແລະ ຈໍລະຈອນສິນຄ້າຢູ່ພາຍໃນປະເທດ ສະບັບເລກທີ 1691/ ທສນຍ, ລົງວັນທີ 7/10/2004 | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 5 | 3603 | ແກັບ Detonator<br>1. ແກັບ Plaon detonator<br>2.ແກັບໄຟຟ້າ Electric detonator<br>3.ແກັບອະໄຟຟ້າ<br>Nonelectric detonator<br>4. ທໍ່ແຕກ Nonel tube<br>5. Detonating line<br>6. Fuse for explosive device | ເພື່ອປົກປ້ອງສຸຂະພາບ, ຊີວິດຂອງຄົນ ແລະ ຮັກສາສິ່ງແວດລ້ອມ. | - ແຈ້ງການ ກ່ຽວກັບການຄຸ້ມຄອງກວດກາວັດຖຸລະເບີດຂອງກິດຈະການພົນລະເຮືອນ ຢູ່ ສປປ ລາວ, ສະບັບເລກທີ 121/, ລົງວັນທີ 29/6/2005<br>- ຂໍ້ຕົກລົງ ວ່າດ້ວຍ ລະບຽບການຄຸ້ມຄອງ ແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວເລກທີ 39/ນຍ, ວັນທີ 12/7/2001<br>- ຂໍ້ຕົກລົງ ວ່າດ້ວຍ ສິດອະນຸຍາດນຳເຂົ້າວັດຖຸທາດລະເບີດຈາກຕ່າງປະເທດເຂົ້າໃນ ສປປ ລາວ, ສະບັບເລກທີ 88/ກປທ, ລົງວັນທີ 12/1/2005 | ກະຊວງ ປ້ອງກັນປະເທດ ( ກົມອຸດສາຫະກຳປ້ອງກັນຊາດ ) | |
| 6 | 3915 | ເສດ, ເສດຕັດ ແລະ ສິ່ງແຕກຫັກຂອງສານພລາສຕິກ (plastics) | ເຫດຜົນທາງດ້ານສິ່ງແວດລ້ອມ | | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມອຸດສາຫະກຳ ) | |
| 7 | 4004.00<br>4012.11<br>4012.12<br>4012.19.90<br>4012.20.10<br>4012.20.90 | ຢາງລົດຍົນທີ່ໃຊ້ແລ້ວບໍ່ວ່າຈະເປັນເສດແຕກຫັກ ຫຼື ເສດຕັດ ຫຼື ບໍ່ກໍ່ຕາມ | ເຫດຜົນທາງດ້ານສິ່ງແວດລ້ອມ | | ກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |

| | | | | | | |
|---|---|---|---|---|---|---|
| 8 | 4901 - 4906<br>4909 - 4911 | ຜະລິດຕະພັນພິມຈຳໜ່າຍ (ປື້ມ, ສິ່ງພິມເອເລັກໂຕຣນິກ ຫຼື ສິ່ງພິມອື່ນເພື່ອຈຳໜ່າຍ) | ເພື່ອປົກປ້ອງຈາລີດປະເພນີຂອງປະຊາຊົນ | ກົດໝາຍ ວ່າດ້ວຍ ການພິມຈຳໜ່າຍ ເລກທີ 05/ສພຊ, ວັນທີ 9/12/2008. | ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ<br>( ກົມພິມຈຳໜ່າຍ ) | |
| 9 | 7108.12.10 | ຄຳແທ່ງ<br>(ສະເພາະຄຳແທ່ງ ທີ່ ສາກົນນຳໃຊ້ເປັນພາຫະນະຊຳລະ) | ຄວາມໝັ້ນຄົງທາງດ້ານເງິນຕາ | - ລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະວັດຖຸມີຄ່າ, ເລກທີ 01/ປປທ ລົງວັນທີ 17/3/2007.<br>- ລະບຽບການສ້າງຕັ້ງ ແລະຄຸ້ມຄອງບໍລິສັດ ນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ, ເລກທີ 01/ທຫລ,ລົງວັນທີ 15/5/2007 | ທະນາຄານ ແຫ່ງ ສປປ ລາວ<br>( ກົມນະໂຍບາຍເງິນຕາ ) | |
| 10 | 7213-7229 | ເຫຼັກເສັ້ນ ແລະ ເຫຼັກຮູບປະພັນຕ່າງໆ | ເພື່ອຄວບຄຸມການນຳເຂົ້າແບບຜິດກົດໝາຍ | - ດຳລັດ ວ່າດ້ວຍ ການຄຸ້ມຄອງ ການສົ່ງອອກແລະການນຳເຂົ້າສະບັບເລກທີ 205/ນຍ, ລົງວັນທີ 11/10/2001.<br>- ແຈ້ງການວ່າດ້ວຍ ຂັ້ນຕອນການດຳເນີນເອກະສານເພື່ອ ນຳເຂົ້າ-ສົ່ງອອກ ແລະການຈໍລະຈອນສິນຄ້າ ຢູ່ພາຍໃນປະເທດ ສະບັບເລກທີ 1691/ຫສນຍ, ລົງວັນທີ 7/10/2004. | ກະຊວງອຸດສາຫະກຳ ແລະການຄ້າ<br>( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 11 | 3215.19.00<br>4802.69.20<br>4802.69.90<br>8443.19.10<br>8443.29.10<br>8443.30.10<br>8443.40.10<br>8443.59.90 | ເຄື່ອງຈັກພິມເງິນ, ເຈັຍພິມ, ນ້ຳມຶກສຳລັບພິມເງິນ ແລະ ເຄື່ອງຈັກຫຼອມເງິນຫຼຽນ | ການຈັດຊື້ຂອງລັດຖະບານ ແລະ ຄວາມໝັ້ນຄົງທາງດ້ານເງິນຕາ | | ທະນາຄານ ແຫ່ງ ສປປ ລາວ<br>( ກົມນະໂຍບາຍເງິນຕາ ) | |

| | | | | | | |
|---|---|---|---|---|---|---|
| 12 | 8525.10<br>8525.20.92<br>8526.10<br>8526.92.00 | ອຸປະກອນໂທລະຄົມ, ເຄື່ອງຮັບ-ສົ່ງຄື້ນວິທະຍຸທີ່ສາມາດຮັບຄື້ນຄວາມຖີ່ໄດ້ແຕ່ 3 KHz ເຖິງ 300 GHz ແລະ ສາມາດກະຈາຍຄື້ນຄວາມຖີ່ວິທະຍຸທີ່ມີຄວາມແຮງແຕ່ 50mW ຂຶ້ນໄປ, ເຄື່ອງລາດາ, ເຄື່ອງຄວບຄຸມຄື້ນວິທະຍຸໄລຍະໄກ ແລະ ເຄື່ອງວິທະຍຸບັນຊາໄລຍະໄກ | ເຫດຜົນທາງດ້ານຄວາມໝັ້ນຄົງຂອງຊາດ | ກົດໝາຍວ່າດ້ວຍໂທລະຄົມ | ອົງການໄປສະນີ ແລະ ໂທລະຄົມແຫ່ງຊາດ<br>( ກົມໂທລະຄົມ ແລະ ອິນເຕີເນັດ ) | |
| 13 | 8467.81<br>8467.91<br>8508.20<br>8508.90 | ຈັກຕັດໄມ້, ເລື່ອຍໄສ້, ລວມທັງສ່ວນປະກອບ-ອຸປະກອນ | ເພື່ອຄວບຄຸມການລັກລອບຕັດໄມ້ທຳລາຍປ່າແລະຮັກສາແຫຼ່ງຊັບພະຍາກອນທຳມະຊາດ | ກົດໝາຍປ່າໄມ້ມາດຕາ 101<br>(ຂໍ້ຫ້າມສຳລັບບັກທຸລະກິດ) | ກະຊວງກະສິກຳ ແລະ ປ່າໄມ້<br>( ກົມປ່າໄມ້ ) | |
| 14 | 8702-8705 | ລົດຍົນທີ່ໃຊ້ແລ້ວ | ເຫດຜົນທາງດ້ານສິ່ງແວດລ້ອມ | - ຂໍ້ຕົກລົງກ່ຽວກັບກົນໄກການນຳເຂົ້າລົດ, ສິ້ນສ່ວນອາໄຫລ່ເພື່ອມາປະກອບຢູ່ໂຮງງານ ສະບັບເລກທີ 14/ນຍ, ລົງວັນທີ 28/2/2003 | ກະຊວງອຸດສາຫະກຳ ແລະ ການຄ້າ<br>( ກົມການນຳເຂົ້າ ແລະ ສົ່ງອອກ ) | |
| 15 | 9303.20<br>9303.30 | ປືນ ແລະ ລູກປືນ ສຳລັບໃຊ້ໃນການຝຶກຊ້ອມ ແລະ ແຂ່ງຂັນກິລາ | ເພື່ອຄວາມປອດໄພຂອງປະຊາຊົນ | | ກະຊວງປ້ອງກັນປະເທດ<br>( ກົມໃຫຍ່ເສນາທິການ ) | |
| 16 | 9504.30<br>9504.90 | ເຄື່ອງຫຼິ້ນເກມ<br>(Gambling machine) | ເພື່ອປົກປ້ອງຈາລິຍະທຳຂອງປະຊາຊົນ | ຂໍ້ກຳນົດວ່າດ້ວຍການຄຸ້ມຄອງກວດກາ ແລະຫຼິ້ນເກມທຸກປະເພດຢູ່ ສປປ ລາວ ເລກທີ 664/ຖວ, ລົງວັນທີ 23/9/2003 | ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ<br>( ກົມວັດທະນະທຳມະຫາຊົນ ) | |
| 17 | | - ທາດລະເບີດ (ທີ່ມີເປົ້າໝາຍຮັບໃຊ້ພົນລະເຮືອນ)<br>- ທາດລະເບີດໄນທຣູນໄນຕເຣດ. | ເພື່ອປົກປ້ອງສຸຂະພາບ, ຊີວິດຂອງຄົນ ແລະ ຮັກສາສິ່ງແວດລ້ອມ. | - ແຈ້ງການກ່ຽວກັບການຄຸ້ມຄອງກວດກາວັດຖຸລະເບີດຂອງກິດຈະການພົນລະເຮືອນ ຢູ່ ສປປ ລາວ, ເລກທີ 121/. | ກະຊວງ ປ້ອງກັນປະເທດ.<br>( ກົມອຸດສາຫະກຳປ້ອງກັນຊາດ) | |

| | | | | | | |
|---|---|---|---|---|---|---|
| | | ຊື່: Amonium Nitrate ສູດ: $NH_4NO_3$ | | ລົງວັນທີ 29/6/05.<br>- ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງ ແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ, ສະບັບເລກທີ 39/ນຍ, ລົງວັນທີ 12/7/2001.<br>- ຂໍ້ຕົກລົງ ວ່າດ້ວຍ ສິດອະນຸຍາດນຳເຂົ້າວັດຖຸທາດລະເບີດຈາກຕ່າງປະເທດເຂົ້າໃນ ສປປ ລາວ, ສະບັບເລກທີ 88/ກປທ, ລົງວັນທີ 12/1/2005. | | |
| 18 | ຊີ້ງຕາມຊະນິດ /ປະເພດໄມ້ | ໄມ້ທ່ອນ ແລະ ໄມ້ແປຮູບທຸກຊະນິດທີ່ຕັດມາຈາກທຳມະຊາດ. | ເພື່ອປ້ອງກັນການລັກລອບຕັດໄມ້ຕາມແນວຊາຍແດນລະຫວ່າງປະເທດ | - ສົນທິສັນຍາ CITES ທີ່ ສປປ ລາວ ເປັນພາຄີ.<br>- ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະການປະສານງານໃນການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້, ສະບັບເລກທີ 17/ ນຍ, ລົງວັນທີ 22/9/2008. | - ກະຊວງ ກະສິກຳ ແລະ ປ່າໄມ້ ( ກົມປ່າໄມ້ )<br>- ກະຊວງອຸດສາຫະກຳແລະການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |

## II. ສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດສົ່ງອອກ

### 1. ສິນຄ້າເກືອດຫ້າມສົ່ງອອກ

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ລະບຽບການ | ຂະແໜງການຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|
| 1 | 1207.91.00<br>1211.40.00<br>1211.90.11<br>1211.90.12<br>1211.90.93<br>1302.11.00<br>2939.11.00<br>2939.19.00<br>2939.91.10 | ເມັດຝິ່ນ, ດອກຝິ່ນ, ກັນຊາ, ຝິ່ນ, ໂຄເຄນ ແລະ ອານຸພັນຂອງມັນ. | ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຄົນ | - ມາດຕາ 146 ກົດໝາຍອາຍາ.<br>- ກົດໝາຍວ່າດ້ວຍຢາເສບຕິດ.<br>- ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20/2/2009. | - ກະຊວງປ້ອງກັນຄວາມສະຫງົບ ( ຕຳຫຼວດປ້ອງກັນຢາເສບຕິດ )<br>- ສຳນັກງານນາຍົກລັດຖະມົນຕີ ( ອົງການກວດກາ ແລະ ຄວບຄຸມຢາເສບຕິດ ). | ຂະແໜງການກ່ຽວຂ້ອງ ຈະອອກບົດແນະນຳກ່ຽວກັບການສົ່ງອອກສິນຄ້າຄວບຄຸມພາຍໃຕ້ຄວາມຮັບຜິດຊອບຂອງຕົນ |
| 2 | 3601-3603<br>3604.10.10<br>8710<br>9301<br>9302<br>9304<br>9305<br>9306<br>9307 | ປືນ, ລູກປືນ ແລະ ອາວຸດສົງຄາມທຸກຊະນິດ (ນອກຈາກທາດລະເບີດເພື່ອຮັບໃຊ້ອຸດສາຫະກຳ) ແລະພາຫະນະຮັບໃຊ້ສົງຄາມ. | ເຫດຜົນທາງດ້ານຄວາມໝັ້ນຄົງຂອງຊາດ. | - ມາດຕາ 5 ຂອງ ກົດໝາຍອາຍາ<br>- ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີວ່າດ້ວຍລະບຽບການຄຸ້ມຄອງແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ, ສະບັບເລກທີ 39/ນຍ, ລົງວັນທີ 12/7/2001. | ກະຊວງ ປ້ອງກັນປະເທດ ( ກົມໃຫຍ່ເສນາທິການ ) | |
| 3 | ອົງຕາມຊະນິດ /ປະເພດໄມ້ | ໄມ້ທ່ອນ ແລະ ໄມ້ແປຮູບທຸກຊະນິດທີ່ໄດ້ມາຈາກທຳມະຊາດ. | ເພື່ອປ້ອງກັນການລັກລອບຕັດໄມ້ທຳລາຍປ່າຕາມແນວຊາຍແດນລະຫວ່າງ ສປປ ລາວ ກັບປະເທດໃກ້ຄຽງ. | - ສົນທິສັນຍາ CITES ທີ່ ສປປ ລາວ ເປັນ ພາຄີ.<br>- ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະການປະສານງານໃນການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້, ສະບັບເລກທີ 17/ ນຍ, ລົງວັນທີ 22/9/2008. | - ກະຊວງ ກະສິກຳ ແລະ ປ່າໄມ້ ( ກົມປ່າໄມ້ )<br>- ກະຊວງອຸດສາຫະກຳແລະການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) | |

| | | | | | | |
|---|---|---|---|---|---|---|
| 4 | | ວັດຖຸບູຮານທີ່ເກົ່າແກ່, ລວມທັງພະພຸດທະຮູບ, ເທວະຮູບ ແລະ ສິ່ງສັກກາລະບູຊາ, ວັດຖຸມໍລະດົກແຫ່ງຊາດທີ່ມີຄຸນຄ່າສູງທາງດ້ານປະຫວັດສາດບູຮານຄະດີ ແລະ ວັດທະນະທຳເຊິ່ງມີອາຍຸແຕ່ 50 ປີ ຂື້ນໄປ. | ເພື່ອຮັກສາມູນມໍລະດົກແຫ່ງຊາດທາງດ້ານສິນລະປະວັດທະນະທຳ | - ມາດຕາ 15 ຂອງກົດໝາຍວ່າດ້ວຍພາສີ.<br>- ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ.<br>- ມາດຕາ 2 ລັດຖະບັນຍັດ ຂອງປະທານປະເທດວ່າດ້ວຍການອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫັວດສາດ ແລະທຳມະຊາດ. | ກະຊວງຖະແຫຼງຂ່າວແລະວັດທະນະທຳ<br>( ກົມມໍລະດົກ ) | |

## 2. <u>ສິນຄ້າຕ້ອງຂໍອະນຸຍາດສົ່ງອອກ</u>

| ລ/ດ | ລະຫັດສິນຄ້າ | ສິນຄ້າ | ເຫດຜົນ | ລະບຽບການ | ຂະແໜງການຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|
| 1 | 1006.10<br>1006.20<br>1006.30<br>1006.40 | ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດ ຈະຂັດ ຫຼື ບໍ່ກໍ່ຕາມ | ເພື່ອປ້ອງກັນການຂາດແຄນ ແລະ ຄວບຄຸມການສົ່ງອອກແບບຜິດກົດໝາຍ | - ດຳລັດ ວ່າດ້ວຍການຄຸ້ມຄອງການສົ່ງອອກ ແລະ ການນຳເຂົ້າ, ສະບັບເລກທີ 205/ນຍ, ລົງວັນທີ 11/10/2001<br>- ແຈ້ງການ ກ່ຽວກັບຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ ແລະ ຈໍລະຈອນສິນຄ້າຢູ່ພາຍໃນປະເທດ ສະບັບເລກທີ 1691/ຫສນຍ, ລົງວັນທີ 7/10/2004. | ກະຊວງອຸດສາຫະກຳ ແລະການຄ້າ<br>( ກົມການນຳເຂົ້າ ແລະ ສົ່ງອອກ ) | ຂະແໜງການກ່ຽວຂ້ອງ ຈະອອກບົດແນະນຳ ກ່ຽວກັບການສົ່ງອອກສິນຄ້າພາຍໃຕ້ຄວາມຮັບຜິດຊອບຂອງຕົນ |
| 2 | 1006.10.10 | ແນວພັນເຂົ້າ | ເພື່ອຮັກສາແນວພັນເຂົ້າພື້ນເມືອງຂອງລາວ ແລະ ຄວບຄຸມການສົ່ງອອກແບບຜິດກົດໝາຍ | - ສົນທິສັນຍາສາກົນວ່າດ້ວຍການປ້ອງກັນພືດ ຫຼື ບັນຊີ IPPC (International Plant Protection Convention)<br>- ລະບຽບການຄຸ້ມຄອງການນຳໃຊ້ແນວພັນພືດ ແລະ ເມັດພັນພືດ ສຳລັບການປູກຝັງຢູ່ໃນ ສປປ ລາວ, ສະບັບເລກທີ 719/ກປ, ລົງວັນທີ 13/12/1997 | ກະຊວງກະສິກຳ ແລະ ປ່າໄມ້<br>( ກົມປູກຝັງ ) | |

| | | | | | | |
|---|---|---|---|---|---|---|
| 3 | 3603 | ແກັບ Detonator<br>1. ແກັບ Plaon detonator<br>2.ແກັບໄຟຟ້າ Electric detonator<br>3.ແກັບບອະໄຟຟ້າ Nonelectric detonator<br>4. ທໍ່ແຕກ Nonel tube<br>5. Detorating line<br>6. Fuse for explosive device | ເພື່ອປົກປ້ອງສຸຂະພາບ, ຊີວິດຂອງຄົນ ແລະ ຮັກສາສິ່ງແວດລ້ອມ | - ແຈ້ງການ ກ່ຽວກັບການຄຸ້ມຄອງກວດກາວັດຖຸລະເບີດຂອງກິດຈະການພົນລະເຮືອນ ຢູ່ ສປປ ລາວ ສະບັບເລກທີ 121/, ລົງວັນທີ 29/6/05<br>- ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງ ແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ ເລກທີ 39/ນຍ, ວັນທີ 12/7/2001<br>- ຂໍ້ຕົກລົງ ວ່າດ້ວຍ ສິດອະນຸຍາດນຳເຂົ້າວັດຖຸທາດລະເບີດຈາກຕ່າງປະເທດເຂົ້າໃນ ສປປ ລາວ ສະບັບເລກທີ 88/ກປທ, ລົງວັນທີ12/1/05 | ກະຊວງປ້ອງກັນປະເທດ<br>( ກົມອຸດສາຫະກຳປ້ອງກັນຊາດ ) | |
| 4 | 3602 | ວັດຖຸລະເບີດ ແລະ ສານລະເບີດ<br>Amonium Nitrate<br>ສູດ: $NH_4NO_3$<br>(Explosives and Explosive substances<br>Amonium Nitrate, Formula: $NH_4NO_3$ ) | ເພື່ອປົກປ້ອງສຸຂະພາບ, ຊີວິດຂອງຄົນ ແລະ ຮັກສາສິ່ງແວດລ້ອມ | - ແຈ້ງການ ກ່ຽວກັບ ການຄຸ້ມຄອງກວດກາວັດຖຸລະເບີດຂອງກິດຈະການພົນລະເຮືອນ ຢູ່ ສປປ ລາວ, ສະບັບເລກທີ 121/, ລົງວັນທີ 29/6/2005<br>- ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດ ຢູ່ ສປປ ລາວ ເລກທີ 39/ນຍ, ລົງວັນທີ 12/7/2001<br>- ຂໍ້ຕົກລົງວ່າດ້ວຍສິດອະນຸຍາດນຳເຂົ້າວັດຖຸທາດລະເບີດຈາກຕ່າງປະເທດເຂົ້າມາໃນ ສປປ ລາວ, ສະບັບເລກທີ 88/ກປທ, ລົງວັນທີ 12/1/2005 | ກະຊວງປ້ອງກັນປະເທດ<br>( ກົມອຸດສາຫະກຳປ້ອງກັນຊາດ ) | |
| 5 | | ຜະລິດຕະພັນໄມ້ສຳເລັດຮູບ | ເພື່ອ ຄວບຄຸມການສົ່ງອອກແບບເສລີຜິດກົດໝາຍ | - ຄຳສັ່ງ ຂອງ ນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະການປະສານງານໃນການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້, ສະບັບເລກທີ | ກະຊວງອຸດສາຫະກຳ ແລະ ການຄ້າ<br>( ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ) | |

| | | | | | | |
|---|---|---|---|---|---|---|
| | | | | 17/ນຍ, ລົງວັນທີ 22/9/2008<br>- ຂໍ້ຕົກລົງ ວ່າດ້ວຍຮູບແບບ ແລະຂະໜາດຜະລິດຕະພັນໄມ້, ສະບັບເລກທີ 1415/ອຄ.ກອກ, ວັນທີ 22/8/2008. | | |
| 6 | 7108.12.10 | ຄຳແທ່ງ, | ເພື່ອຄວາມໝັ້ນຄົງທາງດ້ານເງິນຕາ. | - ລັດຖະບັນຍັດ ຂອງປະທານປະ ເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະວັດຖຸມີຄ່າ, ສະບັບເລກທີ 01/ປປທ, ລົງວັນທີ 17/3/2008<br>- ລະບຽບການສ້າງຕັ້ງ ແລະ ຄຸ້ມຄອງ ບໍລິສັດ ນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ, ເລກທີ 01/ທຫລ, ລົງວັນທີ15/5/2007 | ທະນາຄານ ແຫ່ງ ສປປ ລາວ<br>( ກົມນະໂຍບາຍເງິນຕາ ) | |
| 7 | | ແຮ່ທາດ ແລະຜະລິດຕະພັນແຮ່ທາດ | ເພື່ອຄວບຄຸມການສົ່ງອອກແບບຜິດກົດໝາຍ | ກົດໝາຍວ່າດ້ວຍບໍ່ແຮ່ສະບັບເລກທີ 04/97/ສພຊ; ລົງວັນທີ 12/4/1997 | ກະຊວງພະລັງງານ ແລະ ບໍ່ແຮ່<br>( ກົມບໍ່ແຮ່ ) | |
| 8 | ອີງຕາມຊະນິດ /ປະເພດໄມ້ | ໄມ້ທ່ອນ ແລະ ໄມ້ແປຮູບທີ່ໄດ້ມາຈາກສວນປູກ | ເພື່ອຄວບຄຸມການສົ່ງອອກແບບຜິດກົດໝາຍ | - ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້, ສະບັບເລກທີ 17/ນຍ, ລົງວັນທີ 22/09/2008. | - ກະຊວງກະສິກຳ ແລະ ປ່າໄມ້<br>( ກົມປ່າໄມ້ )<br>- ກະຊວງອຸດສາຫະກຳ ແລະການຄ້າ<br>( ກົມການນຳເຂົ້າ ແລະສົ່ງອອກ ) | |
| 9 | | ຂີ້ເຈຍ | ເພື່ອຄວບຄຸມການສົ່ງອອກແບບຜິດກົດໝາຍ | - ມາດຕາ 29, ກົດໝາຍວ່າດ້ວຍ ກະສິກຳ, ເລກທີ 01/98ສພຊ, ລົງວັນທີ 10/10/98.<br>- ຄຳສັ່ງຂອງລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງ ແລະນຳໃຊ້ຂີ້ເຈຍຢູ່ພາຍໃນປະເທດ, ເລກທີ 0613/ກປ.06, ລົງວັນທີ 08/7/2005 | ກະຊວງກະສິກຳ ແລະ ປ່າໄມ້<br>( ກົມປູກຝັງ ) | |